ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ຖຸງ/ປພຖຂ/໐໓໔໑໑໐**

# ບົດຄວາມ

## ຄວາມສຳພັນ ລາວ ກັບ ສະຫະລັດ

ຄວາມສຳພັນ ລະຫວ່າງລາວ ກັບສະຫະລັດອະເມຣິກາ ໄດ້ມີການພັທນາ ຂື້ນມາເປັນຢ່າງດີ. ຈະເຫັນໄດ້ຈາກການຈັດງານ ຣາຕຣີສະໂມສອນ ສລອງວັນຄົບຮອບ 55 ປີ. ຄວາມສັມພັນ ທາງການທູດ ລະຫວ່າງລາວ ກັບ ສະຫະລັດ ໂດຍທ່ານ Ravic Huso ເອກອັຄຣັຖະທູດສະຫະລັດ ປະຈຳລາວ ພ້ອມພັລຍາ ແລະການເຂົ້າມາຢ້ຽມຢາມພົບປະໂອ້ລົມກັບທ່ານ ໝູນແກ້ວ ອໍຣະບູນ ຣັຖມົນຕຣີ ວ່າການກະຊວງຖແລງຂ່າວ ແລະວັທນະທັມເມື່ອມໍ່ໆມານີ້.

ການຊ່ວຍເຫລືອຂອງຣັຖບານສະຫະລັດ ເພື່ອພັທນາ ທາງດ້ານຊັພຍາກອນມະນຸດ, ທາງດ້ານເສຖກິດ ແລະວັທນະທັມສັງຄົມ ໄດ້ຮັບຄວາມຮ່ວມມືກັບພັກຣັດ ສປປລາວ. ເປັນຢ່າງດີ. ສະຫະຣັດໄດ້ໃຫ້ການຊ່ວຍເຫລືອ ໃນດ້ານການປາບປາມ ການຄ້າຢາເສບຕິດ, ການຄ້າມະນຸດ, ການສະກັດກັ້ນການແຜ່ຣະບາດ ຂອງ ເຊື້ອໂຣກ, ການພັທນາ ເພື່ອຫລຸດຜ່ອນຄວາມຍາກຈົນ ຂອງປະຊາຊົນ, ການເກັບກູ້ຣະເບີດ ທີ່ຍັງບໍ່ທັນແຕກ.

ນອກຈາກນີ້, ກໍຍັງມີການຊ່ວຍເຫລືອ ໃນດ້ານອານຸຣັກວັດຖູໂບຮານ, ໜັງສືພູກໃບລານ, ປັບປຸງ ຫໍພິພິຕພັນ ແຫ່ງຊາດ, ຫໍສມຸດ. ມີການແລກປ່ຽນວັທນະທັມພື້ນເມືອງ, ມີການຝຶກອົບລົມນັກຂ່າວ, ມີການໃຫ້ ທຶນໄປທັສນະສຶກສາຢູ່ສະຫະຣັດຕື່ມອີກ. ສ່ວນການຮ່ວມມືທາງດ້ານ ເສຖກິດການຄ້າ, ການລົງທຶນ ຕ່າງໆນັ້ນ ທາງສະຫະຣັດ ກໍສນັບສນູນ ຊຸກຍູ້ໃຫ້ລາວ ໄດ້ເຂົ້າເປັນສມາຊິກ ອົງການຄ້າໂລກ ໃນເວລາອັນຄວນອີກດ້ວຍ.

ການທີ່ທ່ານ ໝູນແກ້ວ ອໍຣະບູນ ຣັຖມົນຕຣີ ວ່າການກະຊວງຖແລງຂ່າວ ແລະວັທນະທັມ ຍອມຮັບວ່າ "ການຊ່ວຍເຫລືອ ຈາກສະຫະຣັດ ໃນດ້ານຕ່າງໆ ໄດ້ສ້າງຄຸນປໂຍດ ໃຫ້ແກ່ຊາດ ແລະປະຊາຊົນເປັນຢ່າງດີນັ້ນ, ມັນເປັນການຖືກຕ້ອງທີ່ສຸດແລ້ວ", ເພາະສະພາບຄວາມເປັນຈິງ ຢູ່ໃນລາວປະຈຸບັນນີ້, ມັນຄວບຄຸມກັນບໍ່ໄດ້

ອີກແລ້ວ; ຊາວໜຸ່ມເຍົາວະຊົນ ຫລາຍກວ່າ 40,000 ຄົນ ຕິດຢາບ້າ ແລະອີກ 12,000 ຄົນ ຕິດຢາຝິ່ນ. ສ່ວນການຄ້າມະນຸດ, ການສໍ້ຣາດ ບັງຫລວງ, ຄວາມບໍ່ຍຸຕິທັມໃນສັງຄົມ ກໍຍິ່ງເພີ້ມທະວີຂື້ນຊັກໄຊ້".

ການຊ່ວຍເຫລືອຂອງສະຫະຣັດຕໍ່ລາວ, ມີລັກສນະເສີມສ້າງ ແລະປົກປັກຮັກສາວັທນະທັມໄວ້ ໃຫ້ຍືນຍົງ. ໂດຍສະເພາະແມ່ນ ການອານຸຮັກວັດຖຸໂບຮານ, ໜັງສືຜູກໃບລານ, ຫໍພິພິຕພັນ, ຫໍສມຸດແຫ່ງຊາດ ຕ່າງໆ ເຫລົ່ານີ້, ມັນບໍ່ພຽງແຕ່ ເປັນການພັທນາຊັພຍາກອນມະນຸດເທົ້ານັ້ນ, ມັນຍັງເປັນການພື້ນຟູ ແລະຮັກສາໄວ້ຊື່ງ ຄຸນຄ່າ ຂອງຄວາມ ເປັນຊາດອີກດ້ວຍ.

ການຊ່ວຍເຫລືອໃນດ້ານເກັບກູ້ຣະເບີດ ທີ່ຍັງບໍ່ທັກແຕກ, ຄືວ່າ ເປັນການຊ່ວຍເຫລືອ ເພື່ອມະນຸສທັມ ຢ່າງແທ້ຈິງ. ທັງໆທີ່ແມ່ນວຽດນາມ ເປັນຜູ້ລະເມີດສັນຍາ ເອົາດິນລາວ ເປັນບ່ອນເຄື່ອນໄຫວ ຣົດສົງຄາມ, ແຕ່ສະຫະຣັດ ກໍບໍ່ໄດ້ໃສ່ໃຈ. ເປັນການຊ່ວຍເຫລືອ ເພື່ອໃຫ້ທຸກຄົນໄດ້ມີໂອກາດສ້າງສາທໍາມາຫາກິນ; ປາສະຈາກ ອັນຕຣາຍ ຈາກຣະເບີດທີ່ຍັງບໍ່ທັນແຕກ ແລະກໍໄດ້ຮັບການຮ່ວມມື ຈາກທາງການລາວ ເປັນຢ່າງດີ. ດັ່ງຄວາມເວົ້າ ໃນຕອນນຶ່ງ ຂອງທ່ານ ພົນໂທ ດວງໃຈ ພິຈິດ ວ່າ "ຣັຖບານ ສປປລາວ. ຈະພຍາຍາມ ສືບຕໍ່ເພີ້ມທະວີ ປະກອບສ່ວນ ຢ່າງຕັ້ງໜ້າ ໃນການຮ່ວມມື ກັບອົງການສະຫະປະຊາຊາດ ເພື່ອພັທນາ ແລະບັນດາ ສະຖານທູດ ເພື່ອນມິຕປະຈໍາລາວ ເພື່ອຮ່ວມມື ປັບປຸງ ແລະພັທນາ ຂເນຍການ ແກ້ໄຂບັນຫາຣະເບີດ ທີ່ຍັງບໍ່ທັນແຕກ ທີ່ຕົກຄ້າງ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ໃນປະຈຸບັນ."

ພວກເຮົາ ປະຊາຊົນພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ ເຫັນວ່າ ການຊ່ວຍເຫລືອ ຂອງສະຫະຣັດ ມີຕໍ່ລາວ ແລະຄວາມສັມພັນອັນດີງາມ ກໍາລັງໄດ້ຮັບການພັທນາ ໃຫ້ດີຂື້ນ ຢູ່ດັ່ງນີ້, ມັນມີຄວາມໝາຍສໍາຄັນຍິ່ງ, ເພາະມັນໄດ້ໃຫ້ໂອກາດແກ່ປະຊາຊົນໄດ້ພິສູດຄວາມຈິງດ້ວຍຕົນເອງວ່າ "ການກ່າວ ຫາຂອງພັກຣັດ ໃນເມື່ອກ່ອນ ວ່າ ສະຫະຣັດ ເປັນນັກລ້າເມືອງຂື້ນ, ເປັນພວກຍັກ, ພວກມານນັ້ນ ແມ່ນບໍ່ມີຄວາມເປັນຈິງ" ເພາະມັນຕຣົງກັນຂ້າມກັບ ວຽດນາມ ທີ່ພັກຣັດ ບອກວ່າ "ເປັນເພື່ອນມິຕແສນດີ, ບໍ່ມີຫຍັງ ມາທຽບຄຽງໄດ້ນັ້ນ, ຊໍ້າພັດເປັນພວກ ມາປຸ້ນຊາດ ປຸ້ນປະຊາຊົນ, ຂົນເອົາໄມ້ທ່ອນ, ທາດແຮ່ໂລຫະ ຈາກ ລາວໄປ ຢ່າງມະຫາສານ". ສ່ວນພື້ນທີ່ຢູ່ພາຍໃນປະເທດຂອງລາວ, ບ່ອນໃດ ທີ່ອຸດົມສົມບູນ, ພວກເຂົາ ກໍເຂົ້າມາຍຶດຈ່ອງເອົາ ໄປເປັນຂອງພວກເຂົາ. ສິ່ງເຫລົ່ານີ້, ມັນໄດ້ສ້າງຄວາມເດືອດຮ້ອນ ໃຫ້ແກ່ປະຊາຊົນລາວ ຢ່າງບໍ່ມີວັນສິ້ນສຸດລົງໄດ້. ເມື່ອພິສູດຄວາມເປັນຈິງໄດ້ຄືດັ່ງນີ້, ພັກຣັດກໍຕ້ອງມີຄວາມກ້າຫານ, ນໍາພາຊາດນໍາພາ ປະຊາຊົນອອກຈາກການຄອບຄອງ ຂອງວຽດນາມ ດ້ວຍການອອກມາໂອ້ລົມກັບພວກເຮົາ ປະຊາຊົນພັກ ແລະ ກໍາລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ ຈິ່ງຈະແກ້ໄຂບັນຫາ ຄວາມເປັນ–ຄວາມຕາຍ ຂອງຊາດ ບ້ານເມືອງເຮົາໄດ້.

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໑ ມີນາ ໒໐໑໐.**